# ບົດຮຽນທີ 13 - ບັບຕິສະມາ

ທຸກຄົນທີ່ຖືວ່າ ເປັນຄົນຊອບທຳດ້ວຍທາງຄວາມເຊື່ອແລ້ວ ຄວນມີການດຳລົງຊີວິດທີ່ຖວາຍກຽດແກ່ພຣະຜູ້ຊ່ວຍ. ໃນບົດຮຽນທີ 12 ພວກເຮົາໄດ້ຮຽນຮູ້ວ່າ ພຣະວິນຍານບໍລິສຸດເຮັດພິທີຕັດໃຫ້ພວກເຮົາ ເພື່ອວ່າພວກເຮົາຈະບໍ່ເປັນຂ້າທາດຂອງເນື້ອໜັງອີກຕໍ່ໄປ. ຕອນນີ້ພວກເຮົາຈະມາສຶກສາເພີ່ມເຕີມກ່ຽວກັບສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອພວກເຮົາ, ແລະ ພວກເຮົາຄວນຈະຕອບສະໜອງຕໍ່ກັບພຣະພອນນີ້ແນວໃດແດ່.

<u>ພຣະຄຸນອັນລົ້ນເຫຼືອ</u>

ພວກເຮົາທຸກຄົນໄດ້ພັດທະນານິໄສທີ່ເປັນບາບຫຼາຍເທື່ອກ່ອນທີ່ຈະໄດ້ຮັບຄວາມລອດພົ້ນ. ພວກເຮົາຄວນຊອກຫານິໄສຂອງພວກເຮົາທີ່ປ່ຽນແປງຫຼັງຈາກຄວາມລອດພົ້ນຂອງພວກເຮົາ. ໃນຂະນະທີ່ພວກເຮົາເຂົ້າໃຈພຣະພອນທີ່ພວກເຮົາມີຢູ່ໃນພຣະຄຣິດ. ເຖິງຢ່າງໃດກໍຕາມ, ພວກເຮົາເກືອບທັງໝົດຈະມີຢ່າງໜ້ອຍໜຶ່ງ ຫຼື ສອງຢ່າງຂອງຄວາມບາບທີ່ຍັງຕິດແໜ້ນໃນພວກເຮົາໄວ້. ພວກເຮົາອາດຈະຮູ້ສຶກຄືກັບວ່າ ພວກເຮົາໄດ້ພະຍາຍາມຫຼາຍເທື່ອ ເພື່ອຢຸດການເຮັດບາບບາງຢ່າງ ແຕ່ເບິ່ງຄືວ່າ ພວກເຮົາບໍ່ມີຄວາມຫວັງທີ່ຈະຕໍ່ສູ້ກັບອຳນາດຂອງມັນທີ່ມີຕໍ່ພວກເຮົາໄດ້. ຂໍ້ພຣະຄຳພີດັ່ງຕໍ່ໄປນີ້ມີຄວາມສຳຄັນຫຼາຍທີ່ຈະຕ້ອງຈື່ໄວ້: "ຍິ່ງໄປກວ່ານັ້ນ ກົດບັນຍັດຖືກນຳເຂົ້າມາ ເພື່ອວ່າການກະທຳຜິດອາດຈະແຜ່ລາມອອກໄປ. ແຕ່ບ່ອນໃດຄວາມບາບແຜ່ລາມອອກໄປ ພຣະຄຸນຍິ່ງແຜ່ລາມອອກໄປຫຼາຍກວ່າ ເຖິງຄວາມບາບໄດ້ຄອບງຳສັນໃດ ພຣະຄຸນຂອງພຣະເຈົ້າກໍຄອບງຳ ໂດຍຜ່ານທາງຄວາມຊອບທຳຈົນເຖິງຊີວິດນິລັນດອນ ໂດຍພຣະເຢຊູຄຣິດ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ." (ໂຣມ 5: 20-21). ເຈົ້າອາດຈະຮູ້ສຶກຄືກັບວ່າ ອຳນາດຂອງບາບໃນຊີວິດຂອງເຈົ້ານັ້ນຍິ່ງໃຫຍ່, ແຕ່ພຣະຄຸນຂອງພຣະເຈົ້າຍິ່ງໃຫຍ່ກວ່າ. ເຈົ້າຕ້ອງເຊື່ອພຣະເຈົ້າ ເມື່ອພຣະອົງກ່າວວ່າ ເຈົ້າສາມາດມີໄຊຊະນະເໜືອນິໄສທີ່ຜິດບາບໃນຊີວິດຂອງເຈົ້າໄດ້, ເຈົ້າບໍ່ສາມາດເຮັດສິ່ງນີ້ໄດ້ດ້ວຍຄວາມພະຍາຍາມຂອງເຈົ້າເອງ, ແຕ່ດ້ວຍພຣະຄຸນຂອງພຣະເຈົ້າ ເຈົ້າສາມາດດຳລົງຊີວິດທີ່ມີໄຊຊະນະໄດ້!

<u>ພຣະຄຸນ ແລະ ການປະຕິບັດ</u>

ຫຼາຍສາສະໜາສອນວ່າ ຄວາມລອດພົ້ນມາໂດຍພຣະຄຸນຂອງພຣະເຈົ້າ ບວກກັບຄວາມພະຍາຍາມຂອງເຮົາເອງທີ່ຈະເປັນຄົນດີ. ພວກເຮົາໄດ້ເຫັນໃນບົດຮຽນກ່ອນໜ້ານີ້ວ່າ ອັນນີ້ບໍ່ຖືກຕ້ອງ. ຄົນອື່ນພຽງແຕ່ຮັບຮູ້ວ່າ ຄວາມລອດພົ້ນແມ່ນມາຈາກພຣະຄຸນຢ່າງດຽວ, ແຕ່ຫຼັງຈາກນັ້ນ ເຂົາພັດສອນຜູ້ທີ່ເຊື່ອກ່ຽວກັບລະບົບການດຳລົງຊີວິດທີ່ຢູ່ພາຍໃຕ້ກົດບັນຍັດ ແທນທີ່ຈະຢູ່ໃຕ້ພຣະຄຸນ. ອັນນີ້ຖືວ່າເປັນການສອນທີ່ຜິດ. "ແລະຖ້າຫາກໂດຍທາງພຣະຄຸນແລ້ວ, ມັນກໍບໍ່ແມ່ນການປະຕິບັດອີກຕໍ່ໄປ ຖ້າບໍ່ດັ່ງນັ້ນ ພຣະຄຸນກໍບໍ່ແມ່ນພຣະຄຸນອີກຕໍ່ໄປ.: ຖ້າບໍ່ດັ່ງນັ້ນການປະຕິບັດກໍຈະບໍ່ແມ່ນການປະຕິບັດອີກຕໍ່ໄປ" (ໂຣມ 11: 6).
ຂໍ້ນີ້ປະກອບດ້ວຍຫຼັກການທີ່ຈະແຈ້ງທີ່ຈະຄວນຈື່ໄວ້. ພຣະຄຸນ ແລະ ການປະຕິບັດແມ່ນເປັນເອກະລັກເຊິ່ງກັນແລະກັນ. ເມື່ອຜູ້ໃດຜູ້ໜຶ່ງປະຕິບັດໃຫ້ເປັນພຣະຄຸນ, ລາວຍົກເລີກພຣະຄຸນ. ຖ້າພວກເຮົາເວົ້າວ່າ ຄວາມລອດແມ່ນມາໂດຍພຣະຄຸນບວກກັບຄວາມພະຍາຍາມຂອງພວກເຮົາທີ່ຈະເປັນຄົນດີ, ຄວາມຈິງແລ້ວ ພວກເຮົາກຳລັງສອນວ່າ ຄວາມລອດພົ້ນມີມາ ໂດຍການກະທຳພຣະຄຸນກໍໝົດໄປ. ໃນຖານະເປັນຜູ້ທີ່ເຊື່ອ, ຄວາມລອດພົ້ນ ແລະ ການດຳເນີນຊີວິດປະຈຳວັນຂອງພວກເຮົາແມ່ນມາໂດຍພຣະຄຸນຂອງພຣະເຈົ້າ. ຜູ້ໃດກໍຕາມທີ່ປະສົມປະສານການປະຕິດບັດກັບພຣະຄຸນກໍກຳລັງສອນຫຼັກຄຳສອນທີ່ບໍ່ຖືກຕ້ອງ ໂດຍການປະຖິ້ມພຣະຄຸນ.

ແຮງຈູງໃຈແຫ່ງພຣະຄຸນ

ພວກເຮົາໄດ້ຮຽນຮູ້ໃນການສຶກສາກ່ອນໜ້ານີ້ແລ້ວວ່າ ຄວາມລອດພົ້ນແມ່ນມາໂດຍພຣະຄຸນ, ບໍ່ແມ່ນການປະຕິບັດ. ມັນເປັນສິ່ງສຳຄັນທີ່ຈະຕ້ອງເຂົ້າໃຈວ່າ ຊີວິດຂອງພວກເຮົາໃນຖານະເປັນຜູ້ທີ່ເຊື່ອ ຄືຈະຕ້ອງດຳເນີນຊີວິດດ້ວຍພຣະຄຸນ. ມີຫຼາຍຄົນວິພາກວິຈານຜູ້ທີ່ສອນເລື່ອງພຣະຄຸນ ໂດຍການເວົ້າສິ່ງຕ່າງໆ ເຊັ່ນ: "ຖ້າເຈົ້າສອນເລື່ອງພຣະຄຸນ, ຄົນກໍຈະຄິດວ່າ ການເຮັດບາບບໍ່ເປັນຫຍັງເພາະວ່າແນວໃດພວກເຂົາເຂົາກໍຍັງຈະບໍ່ເສຍຄວາມລອດພົ້ນຂອງເຂົາຕໍ່ໄປ." ບາງຄົນຍັງຈະເວົ້າອີກວ່າ ຜູ້ທີ່ສອນເລື່ອງພຣະຄຸນຍັງຊຸກຍູ້ຄົນໃຫ້ເຮັດບາບຫຼາຍຂຶ້ນຕື່ມອີກ. ໂປໂລ, ອັກຄະສາວົກໄດ້ຖືກກ່າວຫາໃນເລື່ອງນີ້ຫຼາຍເທື່ອ. "ແລະ ບໍ່ແມ່ນຢ່າງນັ້ນ (ດັ່ງທີ່ພວກເຮົາໄດ້ຖືກລາຍງານແບບໃສ່ຮ້າຍປ້າຍສີ, ແລະ ດັ່ງທີ່ບາງຄົນຢືນຢັນວ່າພວກເຮົາເວົ້າວ່າ) ໃຫ້ພວກເຮົາ ເຮັດຄວາມຊົ່ວເພື່ອຄວາມດີອາດຈະມາເຖິງບໍ? (ໂຣມ 3:8). ພວກເຮົາກໍເໝືອນກັບໂປໂລ ຈະຖືກກ່າວຫາວ່າ ຍອມຮັບ ຫຼືສົ່ງເສີມຄວາມຊົ່ວເມື່ອພວກເຮົາສອນເລື່ອງພຣະຄຸນ. ເຖິງຢ່າງໃດກໍຕາມ, ພວກເຮົາຕ້ອງສັດຊື່ຕໍ່ພຣະຄຳຂອງພຣະເຈົ້າ ບໍ່ວ່າຄົນອາດຈະເວົ້າ ຫຍັງກໍຕາມ. ພຣະຄຸນບໍ່ໄດ້ນຳໄປສູ່ການດຳເນີນຊີວິດແບບບໍ່ສົນໃຈແຕ່ພັດເປັນແຮງຈູງໃຈໃຫ້ ພວກເຮົາດຳເນີນຊີວິດໃນວິທີທີ່ເປັນທີ່ພໍພຣະໄທ.

## ໂຣມ 6

ບົດທີຫົກຂອງໂລມເປັນບົດພື້ນຖານທີ່ສຳຄັນໃນຄຳພີໄບເບິນກ່ຽວເລື່ອງວ່າຜູ້ທີ່ເຊື່ອຈະດຳເນີນຊີວິດຢູ່ໃນປັດຈຸບັນໄດ້ແນວໃດ. ບົດຮຽນ 13 ແລະ 14 ຈະເນັ້ນໃສ່ບົດນີ້. ຂໍ້ທຳອິດເວົ້າວ່າ, "ແລ້ວພວກເຮົາຈະວ່າແນວໃດ? ພວກເຮົາຈະສືບຕໍ່ຢູ່ໃນບາບເພື່ອວ່າພຣະຄຸນຈະມີຫຼາຍຂຶ້ນບໍ່?" ບາງຄົນອາດຈະຄິດໃນວິທີຕໍ່ໄປນີ້: "ຖ້າຂ້ອຍເຮັດບາບພຽງເລັກນ້ອຍ,ພຣະຄຸນຂອງພຣະເຈົ້າກໍ່ໃຫຍ່ກວ່າ]ບາບຂອງຂ້ອຍ. ຖ້າຂ້ອຍເຮັດບາບຫຼາຍກວ່າ, ພຣະຄຸນຂອງພຣະເຈົ້າຍິ່ງໃຫຍ່ຫຼາຍກວ່າການໃຫ້ອະໄພບາບຂອງຂ້ອຍ. ສະນັ້ນ, ສືບຕໍ່ເຮັດບາບໄດ້ບໍ່ເປັນຫຍັງ ເພາະມັນສະແດງໃຫ້ເຫັນເຖິງພຣະຄຸນທີ່ຍິ່ງໃຫຍ່ຫຼາຍກວ່າທີ່ພຣະເຈົ້າປະທານ
ໃຫ້."

ຂໍ້ທີສອງຂອງໂຣມບົດທີຫົກໃຫ້ຄຳຕອບຕໍ່ຄຳຖາມທີ່ວ່າ. "ພຣະເຈົ້າຊົງຫ້າມ. ພວກເຮົາ ຜູ້ທີ່ຕາຍໄປແລ້ວຕໍ່ຄວາມບາບ ຈະມີຊີວິດຢູ່ຕໍ່ໄປໄດ້ແນວໃດ?" (ໂຣມ 6:2). ພວກເຮົາຈະສືບຕໍ່ເຮັດບາບ ເພື່ອສັນລະເສີນພຣະຄຸນຂອງພຣະເຈົ້າບໍ? ຄຳຕອບຂອງໂປໂລຄື"ພຣະເຈົ້າຫ້າມ." ຢ່າແມ່ນແຕ່ຈະຄິດແບບນັ້ນ! ຄວາມຄິດເຊັ່ນນັ້ນ ກົງກັນຂ້າມກັບພຣະຄຳຂອງພຣະເຈົ້າໂດຍສິ້ນເຊີງ. ພວກເຮົາຈະບໍ່ສືບຕໍ່ເຮັດບາບອີກຕໍ່ໄປ. ພວກເຮົາໄດ້ຕາຍຕໍ່ຄວາມຜິດບາບແລ້ວ. ຄວາມຕາຍໝາຍເຖິງການແຍກຈາກກັນ. ພວກເຮົາຖືກແຍກອອກຈາກບາບໂດຍສິ້ນເຊີງ.

ບັບຕິສະມາເຂົ້າໃນພຣະເຢຊູ

"ເຈົ້າຮູ້ບໍ່ວ່າ ພວກເຮົາຫຼາຍຄົນທີ່ໄດ້ຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດ ກໍໄດ້ຮັບບັບຕິສະມາໃນຄວາມຕາຍຂອງພຣະອົງ?" (ໂຣມ 6:3). ປະເດັນທຳອິດໃນການດຳລົງຊີວິດຢ່າງມີໄຊຊະນະຄື ການຮູ້ບາງສິ່ງບາງຢ່າງ. ໂປໂລກ່າວວ່າ, "ເຈົ້າບໍ່ຮູ້ບໍ?" ເຈົ້າບໍ່ຮູ້ບໍວ່າພວກເຮົາໄດ້ຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດ ແລະການຕາຍຂອງພຣະອົງ? ຜູ້ທີ່ເຊື່ອຫຼາຍຄົນເປັນຫ່ວງກ່ຽວ ກັບສິ່ງທີ່ພຣະເຈົ້າຕ້ອງການໃຫ້ເຂົາເຈົ້າເຮັດ, ແຕ່ເຂົາເຈົ້າບໍ່ໄດ້ໃຊ້ເວລາເພື່ອຮຽນ (ເພື່ອຮູ້) ໃນສິ່ງທີ່ພຣະເຈົ້າກ່າວໃນພຣະຄຳພີ. ມັນເປັນສິ່ງສຳຄັນທີ່ສຸດທີ່ພວກເຮົາແຕ່ລະຄົນຮູ້ວ່າ ພວກເຮົາໄດ້ຮັບບັບຕິສະມາເຂົ້າໃນຄວາມຕາຍຂອງພຣະເຢຊູຄຣິດ. ກ່ອນທີ່ຈະຊອກຫາຄວາມເຂົ້າໃຈຕື່ມວ່າ ສິ່ງນີ້ມີຄວາມໝາຍໃນຊີວິດປະຈຳວັນຂອງພວກເຮົາ, ພວກເຮົາຈະຕ້ອງໃຊ້ເວລາໂດຍຫຍໍ້ໃນການສຶກສາວ່າພຣະຄຳພີກ່າວແນວໃດກ່ຽວກັບການບັບຕິສະມາ.

ການບັບຕິສະມາ, ຄຳໃນພາສາກຣີກທີ່ແປວ່າ "ບັບຕິສະມາ" ຫມາຍຄວາມວ່າ "ຈຸ່ມຕົວລົງໄປໃນນໍ້າ" ຫຼື "ຖືກຫົດດ້ວຍນໍ້າ." ໃນມັດທາຍ 3:11 ໂຢຮັນບັບຕິສະໂຕກ່າວວ່າ: "ເຮົາໄດ້ໃຫ້ບັບຕິສະມາເຈົ້າດ້ວຍນໍ້າໃນການກັບໃຈຢ່າງແທ້ຈິງກໍຕາມ: ແຕ່ຜູ້ທີ່ມາພາຍຫຼັງເຮົານັ້ນ ກໍມີອຳນາດຫຼາຍກວ່າເຮົາ, ແມ່ນແຕ່ເກີບຂອງເພິ່ນ ເຮົາກໍບໍ່ສົມຄວນຈະຈັບ: ພຣະອົງຈະໃຫ້ບັບຕິສະມາແກ່ພວກເຈົ້າດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍໄຟ." ຂໍໃຫ້ຈື່ໄວ້ວ່າ ມີການບັບຕິສະມາສາມແບບທີ່ແຕກຕາງກັນທີ່ກ່າວໃນຂໍ້ນີ້ ຄືການບັບຕິສະມາດ້ວຍນໍ້າ ດ້ວຍພຣະວິນຍານບໍລິສຸດ ແລະ ບັບຕິສະມາດ້ວຍໄຟ. ການບັບຕິສະມາສອງໃນສາມຢ່າງນີ້ບໍ່ກ່ຽວວກັບນໍ້າ. ຢ່າງນ້ອຍມີການບັບຕິສະມາເຈັດຢ່າງທີ່ແຕກຕ່າງກັນໃນພຣະຄຳພີ ແລະສ່ວນຫຼາຍແມ່ນບໍ່ກ່ຽວຂ້ອງກັບນໍ້າເລີຍ. ຂໍໃຫ້ພວກເຮົາເບິ່ງຕື່ມອີກສອງຕົວຢ່າງ.

"ຍິ່ງໄປກວ່ານັ້ນ, ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຢາກໃຫ້ເຈົ້າລືມມວ່າ ບັນພະບຸລຸດຂອງພວກເຮົາທັງໝົດໄດ້ຕົກຢູ່ພາຍໃຕ້ກ້ອນເມກ, ແລະໄດ້ຜ່ານທະເລໄປແນວໃດ ແລະທຸກຄົນໄດ້ຮັບບັບຕິສະມາເຂົ້າໃນໂມເຊໃນເມກ ແລະ ໃນທະເລ" (1 ໂກຣິນໂທ 10: 1-2). ຂໍ້ພຣະຄຳພີເຫຼົ່ານີ້ກ່າວເຖິງເຫດການໃນອົບພະຍົບ 13-14. ພຣະເຈົ້າແຍກນໍ້າອອກກາງທະເລແດງ ແລະອິດສະລາແອນຍ່າງຜ່ານທະເລເທິງພື້ນດິນແຫ້ງ. ອີງຕາມຂໍ້ພຣະຄຳພີທີ່ອ້າງເຖິງຂ້າງເທິງ, ອິດສະຣາເອນໄດ້ຮັບບັບຕິສະມາ ເມື່ອພວກເຂົາຍ່າງເທິງພື້ນດິນແຫ້ງ. ຊັດເຈນວ່າ ບໍ່ມີນໍ້າເຂົ້າໄປກ່ຽວຂ້ອງກັບບັບຕິສະມານີ້.

"ແຕ່ຂ້າພະເຈົ້າ ຈະຮັບບັບຕິສະມາ; ແລະ ຂ້າພະເຈົ້າກໍເປັນທຸກໃຈຫຼາຍປານໃດຈົນກວ່າມັນຈະສຳເລັດ!" (ລູກາ 12:50). ພຣະເຢຊູຄຣິດກໍໄດ້ຮັບບັບຕິສະມາດ້ວຍນໍ້າແລ້ວ (ລູກາ 3:21). ແຕ່ພຣະອົງເວົ້າເຖິງການບັບຕິສະມາໃນອະນາຄົດ ໃນລູກາ 12:50. ນີ້ແມ່ນການກ່າວອ້າງອີງເຖິງການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ. ມີການກ່າວວ່າ ການຖືກຄຶງໄວ້ຂອງພຣະອົງເປັນການບັບຕິສະມາ, ແຕ່ພຣະອົງບໍ່ໄດ້ຈຸ່ມຕົວລົງໃນນໍ້າ ຫຼືບໍ່ໄດ້ຖືກຖອກນໍ້າໃສ່ເທິງໄມ້ກາງແຂນ! ດັ່ງນັ້ນ ພວກເຮົາສາມາດສະຫຼຸບໄດ້ຄຳວ່າ "ບັບຕິສະມາ" ບໍ່ໄດ້ໝາຍຄວາມວ່າ "ຈົມຢູ່ໃນ (ຫຼືຖອກລົງດ້ວຍນໍ້າ)."

ໃນພຣະຄຳພີ, ຄຳວ່າ "ບັບຕິສະມາ" ໝາຍເຖິງແນວຄວາມຄິດຂອງການຖືກວາງລົງໃນບາງສິ່ງບາງຢ່າງ ຫຼືການລະບຸໄວ້ກັບບາງສິ່ງບາງຢ່າງ. ໃນເວລາທີ່ອິດສະຣາເອນຍ່າງຜ່ານທະເລຢູ່ເທິງພື້ນດິນແຫ້ງ, ພວກເຂົາຖືກວາງໄວ້ໃນການນຳຂອງໂມເຊ. ເມື່ອພຣະເຢຊູຄຣິດສິ້ນພຣະຊົນເທິງໄມ້ກາງແຂນ, ພຣະອົງໄດ້ຖືກວາງໄວ້ກັບບາບຂອງພວກເຮົາ ແລະ ຄວາມຕາຍທີ່ຄວາມບາບນຳມາໃຫ້. ໂຣມບົດທີ 6 ບອກ ພວກເຮົາວ່າ ພວກເຮົາໄດ້ຮັບບັບຕິສະມາໃນພຣະເຢຊູຄຣິດ. ນີ້ແມ່ນວຽກງານຂອງພຣະວິນຍານບໍລິສຸດ ແລະ ບໍ່ມີການກ່ຽວຂ້ອງກັບນ້ຳເລີຍ. ພຣະວິນຍານບໍລິສຸດໃຫ້ພວກເຮົາເຂົ້າໄປໃນພຣະເຢຊູຄຣິດ.ພວກເຮົາຖືກລະບຸດ້ວຍການຕາຍຂອງພຣະອົງ. ເວົ້າອີກຢ່າງໜຶ່ງພຣະເຈົ້າຖືວ່າການຕາຍຂອງພຣະເຢຊູຄຣິດແມ່ນເພື່ອຊຳລະບາບກຳຂອງພວກເຮົາ.ອັນນີ້ເປັນຄວາມຈິງສຳລັບທຸກຄົນທີ່ໄດ້ຮັບການຖືວ່າ ເປັນຄົນຊອບທຳດ້ວຍຄວາມເຊື່ອ. [ໃນບົດຮຽນທີ 14, ພວກເຮົາຈະສືບຕໍ່ການສຶກສາຂອງພວກເຮົາໃນໂຣມ 6. ]

ຄຳຖາມທົບທວນ ບົດຮຽນ 13 - ການບັບຕິສະມາ

ຖືກ ຫຼື ຜິດ

1. ຕາບໃດທີ່ພວກເຮົາຮູ້ແລ້ວວ່າ ພວກເຮົາຈະໄປສະຫວັນ, ພວກເຮົາບໍ່ຄວນສົນໃຈວ່າ ພວກເຮົາຈະດຳເນີນຊີວິດແນວໃດໃນຊີວິດນີ້.
2. ຄວາມລອດເປັນການປະສົມປະສານກັບພຣະຄຸນຂອງພຣະເຈົ້າ ແລະຄວາມພະຍາຍາມຂອງພວກເຮົາທີ່ຈະເປັນຄົນດີ.
3. ໂຣມ 6 ຖືກຂຽນຂຶ້ນມາ ເພື່ອເຈາະຈົງສອນພວກເຮົາວ່າ ຈະລອດພົ້ນຈາກນາລົກໄດ້ແນວໃດ.
4. ພຣະເຈົ້າບໍ່ຕ້ອງການໃຫ້ພວກເຮົາສືບຕໍ່ເຮັດບາບ.

ຄຳຖາມແບບປາລະໄນ

5. ຄຳວ່າ "ບັບຕິສະມາ" ມີຄວາມໝາຍວ່າ:
   ກ. ຈຸ່ມຕົວຢູ່ໃນນໍ້າ
   ຂ. ຊິດນໍ້າໃສ່
   ຄ. ການບັບຕິສະມາເດັກນ້ອຍ
   ງ. ວາງໃສ່ ຫຼື ລະບຸໃສ່ບາງສິ່ງບາງຢ່າງ

6. ພຣະເຢຊູຄຣິດໄດ້ຮັບບັບຕິສະມາ:
   ກ. ກັບນໍ້າ
   ຂ. ເມື່ອພຣະອົງຕາຍເທິງໄມ້ກາງແຂນ
   ຄ. ໂດຍໂມເຊ
   ງ. ທັນທີທີ່ພຣະອົງໄດ້ເກີດມາ

7. ກ່ອນທີ່ພວກເຮົາຈະລອດພົ້ນພວກເຮົາ:
   ກ. ຜັດທະນານິໄສບາບຫຼາຍຢ່າງ
   ຂ. ໄດ້ສະແຫວງຫາພຣະເຈົ້າດ້ວຍສຸດໃຈຂອງພວກເຮົາ
   ຄ. ໂດຍພື້ນຖານແລ້ວແມ່ນດີ
   ງ. ເຮັດໃຫ້ພຣະເຈົ້າພໍໃຈໃນຫຼາຍໆ ດ້ານ

ຕື່ມໃສ່ຊ່ອງຫວ່າງ

8. ບໍ່ວ່າຜູ້ຄົນຈະເວົ້າອັນໃດກໍຕາມ, ພວກເຮົາຕ້ອງ____________________ຕາມພຣະຄຳຂອງພຣະເຈົ້າ.
9. ພວກເຮົາຈະບໍ່ສືບຕໍ່ເຮັດບາບ ເພາະວ່າພວກເຮົາ__________________ຈະເຮັດບາບ.
10. ມັດທາຍ 3:11 ກ່າວເຖິງສາມປະເພດທີ່ແຕກຕ່າງກັນຂອງ__________________.